# ໜັງສື ໂຢບ

ໃຈຄວາມສຳຄັນ   ການລອງເບິ່ງ

ຈຳນວນບົດ   ໔໒ ບົດ

## ໑. ຄຳນຳ

ໂຢບເປັນໜັງສືເຫລັ້ມຕົ້ນໃນພາກທີ່ສາມ ຊຶ່ງເປັນພາກກາບກອນໃນພຣະຄັມພີເດີມ ແລະເປັນໜັງສືທີ່ເລົ່ານິທານຊຶ່ງເກີດຂຶ້ນກັບທ່ານໂຢບຈິງໆ ຄາວສໄມຂອງທ່ານໂຢບຍັງບໍ່ຮູ້ຈັກຄັກ ແຕ່ຄຣູສ່ວນຫລາຍຄິດວ່າເພິ່ນດຳເນີນຊີວິດຢູ່ໃນຄາວທ່ານອັບຣາຮາມ ທ່ານໂຢບເປັນຄົນມີອາຍຸຍືນເໝືອນກັບຄົນບູຮານທົ່ວໆໄປ (໔໒:໑໖) ແລະມີຊັບສົມບັດ ສັດພາຫະນະຫລວງຫລາຍເໝືອນກັບອາຣາຮາມດ້ວຍ

## ໒. ວ່າດ້ວຍເນື້ອຄວາມ

ເປັນໜັງສືແກ້ບັນຫາເຣື່ອງຄົນທ່ຽງທັມຖືກຍາກລຳບາກ ແຕ່ການລຳບາກບໍ່ແມ່ນການລົງໂທດຂອງພຣະເຈົ້າ ແລະບໍ່ແມ່ນຜົນຂອງບາບກັມ ແຕ່ເພາະ ພຣະເຈົ້າມີ ພຣະປະສົງຢາກເຝິກຫັດຄວາມ ເຊື່ອ ຂອງ ພວກ ເຮົາ ແລະ ເມື່ອຄາວສຸດທ້າຍກໍຈະມີ ການສັຣເສີນ ພຣະເຈົ້າເພາະຄວາມ ລຳບາກນັ້ນ

ເຣື່ອງການສົນທະນາຣະຫວ່າງ ພຣະເຈົ້າກັບພະຍາມານມີຢູ່ແຕ່ໃນໜັງສືນີ້ເທົ່ານັ້ນ ບົດສົນທະນານີ້ຊ່ອຍໃຫ້ເຮົາເຂົ້າໃຈຄວາມຄິດ ແລະຄວາມ

ມຸ່ງໝາຍ ຂອງ ພະຍາມານຄື ເຮັດໃຫ້ ຄົນທີ່ ເຊື່ອບໍ່ຮູ້ນໃຈແລ້ວດ່າ ພຣະເຈົ້າ ແຕ່ພັງລືມໄດ້ສອນວ່າ ພະຍາມານເອົາຊະນະບໍ່ໄດ້

ງ. ວ່າດ້ວຍຄວາມສຳຄັນຂອງທ່ານໂຢບ

ກ. ທ່ານໂຢບເປັນຜູ້ມີກິຣິຍາມາຣະຍາດດີທີ່ສຸດ (ບົດ ໑ ກັບ ໔) ເພິ່ນຍອມຢູ່ໃຕ້ບັງຄັບຂອງພຣະເຈົ້າແລະບໍ່ມີຄວາມເສັຍໃຈ

ຂ. ໂຢບເປັນຄົນຊອບທັມແລະເປັນຜູ້ຖອມຕົວ (໔໔:໑–໖)

ຄ. ຄວາມຍາກລຳບາກເປັນຊ່ອງທາງໃຫ້ເອົາໄດ້ ຮຽນຮູ້ພຣະເຈົ້າ (໔໔:໕)

ງ. ບຳເໜັດຣາງວັນຂອງເພິ່ນໃນບົດ ໔໔ ກໍເປັນ ບຳເໜັດແຫ່ງຄວາມເຊື່ອ (໑໓:໔໕–໔໗)

ຄືເພິ່ນໄດ້ເຊື່ອຢ່າງດັກແນ່ວ່າ ມີການຄືນມາຈາກຕາຍ

໔. ວ່າດ້ວຍການປຽບທຽບ

ກ. ເຄື່ອງໃຖ່ໂທດ ບົດ ໓໓:໔໔ ປຽບຄືພຣະເຢຊູເອງ

ຂ. ໂຢບ ມີການປຽບເຖິງພຣະເຢຊູດັ່ງນີ້ :

໑. ໃນການທີ່ເພິ່ນຖືກນິນທາ ໔. ເພິ່ນໄດ້ທູນຂໍ ອະໄພໂທດໃຫ້ພວກມິດສະຫາຍ (໔໔:໘)

ຄ. ພວກມິດສະຫາຍຂອງໂຢບ ປະກົດຄືເປັນແບບ ແຫ່ງການທົດລອງ.

## ໖. ວ່າດ້ວຍບົດສຳຄັນ

ບົດ ໑ ກິຈການອັນດີຂອງໂຢບ

ບົດ ໒໙ ໂຢບຄິດຮອດຄວາມສນຸກສນານອັນເກົ່າ

ບົດ ໓໓ ວ່າດ້ວຍພຣະດຳຣັດຂອງພຣະເຈົ້າ (ຂໍ້ ໑໔—໓໐)

ບົດ ໔໒:໑–໖ ໃຈຄວາມສຳຄັນຂອງໜັງສືນີ້

ບົດ ໔໒:໗–໑໗ ການຕັ້ງຂຶ້ນໃໝ່ແລະຄວາມຈະເຣີນ

## ໗ ການແບ່ງເປັນພາກ

ພາກທີ ໑ ການເປັນຢູ່ຂອງໂຢບກ່ອນຖືກລຳບາກ

ບົດ ໑:໑–໕

ພາກທີ ໒ ເມື່ອເວລາໂຢບຖືກການທົດລອງ

ບົດ ໑:໖–໔໒:໖

ກ. ການສົນທະນາຣະຫວ່າງພຣະເຈົ້າ

ກັບພະຍາມານ ໑:໖–໒:໑໐

ພະຍາມານມາປະກົດຕໍ່ພຣະເຢໂຮວາ

ເທື່ອທຳອິດ ໑:໖–໑໒

ພະຍາມານທຳລາຍເຂົ້າຂອງແລະ

ລູກຂອງທ່ານໂຢບ ໑:໑໓–໒໒

ພະຍາມານມາປະກົດຕໍ່ພຣະເຢໂຮວາ

ເທື່ອທີສອງ ໒:໑–໗

ພະຍາມານກະທຳໃຫ້ທ່ານໂຢບຖືກເຈັບ
ໃນຕົນຕົວ ໒:໘–໑໐

໒. ການສົນທະນາລະຫວ່າງທ່ານ
ໂຢບກັບພວກມິດສະຫາຍ ໒:໑໑ ບົດ ໓໗

ຄຳເທສນາຂອງເອລີຟາຂອງບີເລດາດ
ແລະຂອງໂຈຟາ ບົດ ໓–໓໑

ຄຳເທສນາຂອງເອລີຮູ ບົດ ໓໒–໓໗

໓. ການສົນທະນາລະຫວ່າງພຣະ
ເຢໂຮວາກັບທ່ານໂຢບ ບົດ ໓໘:໑–໔໒:໖

ການສະແດງຂອງພຣະເຢໂຮວາ ບົດ ໓໘–໔໑

ຄຳຕອບຂອງທ່ານໂຢບແລະການ
ຖອມຕົວ ບົດ ໔໒:໑–໖

ພາກທີ ໓ ເລື່ອງສຸດທ້າຍ ໔໒:໗–໑໗

ຄວາມຈະເຣີນແລະໄດ້ຮັບພຣະພອນ